ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ເຊລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0992-./ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 01 APR 2025

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງການປັບປຸງວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດ ອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.
- ອີງຕາມ ມະຕິຂອງກອງປະຊຸມສະພາບໍລິຫານ ສະໄໝສາມັນ ຄັ້ງທີ 1/2025, ຄັ້ງວັນທີ 17/03/2025.
- ອີງຕາມ ມະຕິຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນ ຄັ້ງທີ 2/2025, ຄັ້ງວັນທີ 24/03/2025.

ບໍລິສັດ ເຊລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບການປັບປຸງວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2024 ເຊິ່ງໄດ້ເປີດເຜີຍໃຫ້ຜູ້ຖືຮຸ້ນຊາບແລ້ວ ລາຍລະອຽດໃນເອກະສານ ສະບັບເລກທີ 0808/ຜ-ຟຟລ, ລົງວັນທີ 18 ມີນາ 2025 ແລະ ສະເໜີຂໍລົບລ້າງວາລະກ່ຽວກັບການພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານບາງທ່ານ ທີ່ຄົບອາຍຸການ, ການກຳນົດຜູ້ທີ່ມີອຳນາດລົງລາຍເຊັນຜູກພັນບໍລິສັດ ແລະ ການກຳນົດອາຍຸຂອງບັນດາກຳມະການສະພາບໍລິຫານບໍລິສັດ, ເຊິ່ງວາລະມີລາຍລະອຽດດັ່ງນີ້:

1) ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ມີດັ່ງນີ້:

ວາລະທີ 1: ລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ.
ວາລະທີ 2: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມ ວິສາມັນຜູ້ຖືຮຸ້ນ ຄັ້ງທີ 01/2025.
ວາລະທີ 3: ພິຈາລະນາ ແລະ ອະນຸມັດເອກະສານລາຍງານການເງິນ 6 ເດືອນຕົ້ນປີ 2024 ແລະ ການອະນຸມັດບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 06 ເດືອນຕົ້ນປີ 2024 ແລະ ເລື່ອງເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2024.
ວາລະທີ 4: ພິຈາລະນາ ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2024 ລວມທັງລາຍງານການເງິນຂອງບໍລິສັດ ປີ 2024.
ວາລະທີ 5: ພິຈາລະນາ ແລະ ອະນຸມັດແຜນການດຳເນີນທຸລະກິດຂອງບໍລິສັດປີ 2025.
ວາລະທີ 6: ພິຈາລະນາ ແລະ ອະນຸມັດການຄັດເລືອກ ແລະ ກຳນົດຄ່າວ່າຈ້າງຜູ້ກວດສອບພາຍນອກ ສຳລັບ ປີ 2026-2028.
ວາລະທີ 7: ພິຈາລະນາ ແລະ ອະນຸມັດການເພີ່ມຕື່ອຄຸນຄັດສະນີເງິນເດືອນພື້ນຖານ ຂອງພະນັກງານບໍລິສັດ.

2) ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆ ທີ່ຈຳເປັນກ່ຽວກັບການກະກຽມເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໄດ້

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ທຸກປະການ, ລວມທັງໃຫ້ມີອຳນາດໃນການດຳເນີນການໃດໜຶ່ງອັນຈຳເປັນ ລວມທັງການກຳນົດວາລະການປະຊຸມ ກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ; ແລະ

3) ກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄຶ: ແຕ່ງຕັ້ງຕັ້ງ ທ່ານ ສຈ. ປອ ພູເພັດ ກ້ຽວພິລາວົງ ແລະ ທ່ານ ພັນປານີ ສິດທິລາດ ກຳມະການອິດສະຫຼະ ເປັນຜູ້ຮັບມອບສັນທະຈາກຜູ້ຖືຮຸ້ນ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,
ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸກສະຫວາດ ໂສສຸພັນ
ຜູ້ອຳນວຍການໃຫຍ່